## ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 11 ກຸມພາ 2024 (02-11-2024)

---

# ການອະທິຖານໃນຄວາມເຊື່ອ

**ຈຸດສຳຄັນໃນບົດຮຽນ:** ຄວາມເຊື່ອສແວງຫາພຣະເຈົ້າເພື່ອຈັດຕຽມສິ່ງທີ່ພວກເຮົາຕ້ອງການ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ນັບຕັ້ງແຕ່ໂຣກລະບາດ, ພວກເຮົາໄດ້ຝຶກຝົນທັສນະທີ່ແປກປລາດຂຶ້ນພາຍໃຕ້ການດູແລຢ່າງໃກ້ຊິດ. ໃນຄວາມເປັນຈິງແລ້ວ, ການສຶກສາຄົ້ນຄວ້າວິຈັຍຫຼາຍຂື້ນໄດ້ສລຸບວ່າ ຊາວອາເມຣິກັນໃຊ້ເວລາຫຼາຍໃນສື່ສານມວນຊົນ(ໂທລະທັດ, ການບໍລິການຖ່າຍທອດ, ສື່ສັງຄົມ, ການສົ່ງຂໍ້ຄວາມ, ແລະການຫຼິ້ນເກມ) ຫຼາຍກວ່າໃຊ້ເວລານອນຫຼັບໄປອີກ. ການເບິ່ງທີວີຫຼາຍເຣື່ອງຫຼາຍຕອນໃນເວລາສັ້ນໆ ໄດ້ກັບກາຍເປັນງານອະດິເຫຼກປະຈຳຊາດ. ຂ້າພະເຈົ້າຈຳເປັນຕ້ອງສາລະພາບວ່າເສັຽຄວາມຕັ້ງໃຈໃນເມື່ອເບິ່ງເຣື່ອງໃນທີວີທີ່ຕ້ອງໄດ້ລໍຖ້າເປັນເວລາໝົດອາທິດນຶ່ງກອ່ນຈະຮູ້ວ່າຜູ້ຊາຍໃນເຣື່ອງຈະຄົ້ນພົບວ່າເມັຽຂອງລາວເປັນນັກສືບຣັສເຊັຽ(Russian spy).

ເຖິງຢ່າງໃດກໍ່ຕາມ, ການອະທິຖານຢ່າງບໍ່ລົດລະກໍ່ບໍ່ເຄີຍເກີດຂຶ້ນແທ້ໆ. ຖ້າຫາກມັນໄດ້ເກີດຂຶ້ນ, ບາງສິ່ງທີ່ອັສຈັນກໍອາດຈະເກີດຂຶ້ນ. ຜູ້ເຊື່ອສ່ວນໃຫຍ່ບໍ່ໄດ້ກຳນົດເວລາສຳລັບການອະທິຖານແຕ່ລະມື້. ພຽງແຕ່ສາມສິບເອັດເປີເຊັນ(31%)ຂອງບັນດາຜູ້ເຊື່ອອ້າງວ່າພວກເຂົາເຈົ້າກຳນົດເວລາສຳລັບການອະທິຖານ. <u>ແມ່ນຫຍັງຄືສິ່ງທີ່ຜິດປົກກະຕິໃນຮູບພາບນີ້</u>? ຕລອດທົ່ວຂ່າວປະເສີດ, ພວກເຮົາອ່ານວ່າພຣະເຢຊູຊົງໄດ້ໃຊ້ເວລາອັນໃຫຍ່ຫຼວງຂອງພຣະອົງອະທິຖານ. <u>ຖ້າຫາກພຣະບຸດຂອງພຣະເຈົ້າຕ້ອງການອະທິຖານຫຼາຍຊໍ່ານັ້ນ, ພວກເຮົາກໍ່ຕ້ອງອະທິຖານດ້ວຍຄວາມເຊື່ອເຊັ່ນດຽວກັນ.</u>

| ທ່ານຖືກລໍ້ລວງໃຫ້ເບິ່ງຢ່າງບໍ່ລົດລະ ລາຍການຫຼືຊຸດໃດໃນທີວີ? |
|---|

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2 ແລະ 3)

### ການສຶກສາພຣະຄັມພີ

## 1. <u>ລູກາ 11:1-4</u>

*1 ຢູ່ມາ, ເມື່ອພຣະເຢຊູຊົງອ້ອນວອນຢູ່ໃນບ່ອນນຶ່ງ ພໍສິ້ນສຸດລົງສາວົກຂອງພຣະອົງຄົນນຶ່ງທູນວ່າ, "ນາຍເອີຍ, ຂໍສອນພວກຂ້ານ້ອຍ*
*ໃຫ້ອ້ອນວອນເໝືອນໂຢຮັນໄດ້ສອນພວກລູກສິດຂອງຕົນ." 2 ພຣະອົງຊົງກ່າວກັບເຂົາວ່າ, "ເມື່ອພວກທ່ານອ້ອນວອນຈົ່ງກ່າວວ່າ, 'ຂ້າ*
*ແດ່ພຣະບິດາ ຂໍໃຫ້ພຣະນາມຂອງພຣະອົງເປັນທີ່ໂຄຣົບບູຊາ ຂໍໃຫ້ພຣະຣາຊອານາ ຈັກຂອງພຣະອົງມາຕັ້ງຢູ່. 3 ຂໍຊົງໂຜດປະທານ*
*ອາຫານປະຈຳວັນໃຫ້ຂ້າພຣະອົງທັງຫລາຍທຸກໆວັນ. 4 ຂໍຊົງໂຜດຍົກຜິດບາບຂອງຂ້າພຣະອົງທັງຫລາຍ ດ້ວຍວ່າຂ້າພຣະອົງຍົກ*
*ຄວາມຜິດບາບຂອງທຸກຄົນທີ່ເຮັດຜິດຕໍ່ຂ້າພຣະອົງນັ້ນ ຂໍຢ່າຊົງພາຂ້າພຣະອົງທັງຫລາຍເຂົ້າໄປໃນການທົດລອງ'."*

ບັນດາພວກສາວົກໄດ້ເຫັນພຣະເຢຊູຊົງຄວບຄຸມແລະຊົງບັນຊາດິນຟ້າອາກາດ, ຊົງປິ່ນປົວພຍາດຊຳເຮື້ອ, ຊົງສົ່ງພວກຜີມານຮ້າຍແລ່ນໄປສູ່ເຂດແດນໄກ ແລະຊົງລ້ຽງຝູງຊົນ, ແຕ່ພວກສາວົກໄດ້ຂໍໃຫ້ພຣະອົງຊົງສອນຄວາມຊຳນິຊຳນານອັນນຶ່ງໃຫ້ແກ່ພວກເຂົາເຈົ້າຄື: **ການອະທິຖານ**. ພວກເຂົາເຈົ້າຮູ້ຈາກວິທີການດຳເນີນການຂອງພຣະເຢຊູວ່າການອະທິຖານເປັນກຸນແຈທີ່ເປີດປະຕູອື່ນໆຂອງຊີວິດທີ່ມີອຳນາດ. **ຈົ່ງຄິດເບິ່ງໃຫ້ດີ.** ພວກເຮົາໄດ້ເຂົ້າເຝົ້າພຣະອົງຜູ້ຊົງສ້າງທຸກສິ່ງທຸກຢ່າງນັບຕັ້ງແຕ່ວົງໂຄຈອນຂອງດາວພະເສົາ(Saturn)ໄປຈົນເຖິງສັດເດັຽລະສານເຊເຣນເກຕີ(Serengeti). <u>ໂອກາດທີ່ຈະຄຸເຂົ່າລົງຕໍ່ພຣະພັກພຣະເຈົ້າພຣະບິດາແລະສົນທະນາກັບພຣະອົງຄືສິ່ງທີ່ຍິ່ງໃຫຍ່ທີ່ສຸດຂອງຝັ່ງນີ້ຂອງສວັນ</u>. <u>ມັນເປັນໂອກາດສຳລັບການເຕີບໃຫຍ່ຢ່າງເລິກເຊິ່ງ</u>. ໃນຂນະທີ່ຄຳເທສນາຢູ່ຈ້າຍພູ ມັດທາຍບົດທີ່

5-7 ຂະຫຍາຍການສອນຂອງພຣະຄຣິດກ່ຽວກັບການອະທິຖານ, ໃຫ້ພາກັນມາເລີ່ມຕົ້ນດ້ວຍການກວດສອບສັ້ນໆກ່ຽວກັບແບບຢ່າງການອະທິຖານ(the Model Prayer).

ພວກເຮົາມັກຈະລືມວ່າແບບຢ່າງການອະທິຖານໄດ້ເປີດເຜີຍໂຄງຮ່າງທີ່ມີພລັງແລະຂ່າວສານທີ່ເຂັ້ມແຂງກ່ຽວກັບການອະທິຖານ. ຊາວຄຣິສະຕຽນສ່ວນຫຼາຍອະທິຖານເພື່ອໃຫ້ພຣະເຈົ້າຊົງທຳງານ, ແຕ່ການອະທິຖານແມ່ນພຣະເຈົ້າຊົງເຮັດວຽກກັບທ່ານ. ນີ້ແມ່ນສິ່ງທີ່ແບບຢ່າງການອະທິຖານຊົງກະທຳ. ມັນມີຈຸດປະສົງເພື່ອຊ່ວຍໃຫ້ພວກເຮົາສຸມໃສ່ການຈັດລະດັບຄວາມສຳຄັນຂອງພວກເຮົາໃໝ່ກ່ຽວກັບການເຄື່ອນໄຫວຂອງພຣະເຈົ້າ. ມັນປັບທັສນະຄະຕິແລະຄວາມສົນໃຈຂອງພວກເຮົາຈາກຄວາມວຸ້ນວາຍຂອງຊີວິດປະຈຳວັນ. **ມັນເຮັດໃຫ້ພວກເຮົາເປັນສູນກາງນ້ຳພຣະທັຍຂອງພຣະເຈົ້າ.** ຄຳອະທິຖານຂອງອົງພຣະຜູ້ເປັນເຈົ້າເຕືອນສະຕິຂ້າພະເຈົ້າວ່າ ໃນອົງພຣະຄຣິດ, ຂ້າພະເຈົ້າມີຊັບພະຍາກອນທີ່ຈະປະເຊີນກັບທຸກສິ່ງທຸກຢ່າງ. ມັນເປັນເຣື່ອງງ່າຍທີ່ບັນດາຜູ້ເຊື່ອມາດົນນານແລ້ວທີ່ຈະປະໝາດ (take for granted) ການອະທິຖານໂດຍບໍ່ຮູ້ສຶກຕົວ. ພຣະເຢຊູຊົງເຊື້ອເຊີນພວກເຮົາໃຫ້ມາຫາພຣະອົງເພື່ອເປັນແຫຼ່ງທີ່ມາຂອງຊັບພະຍາກອນສຳລັບທຸກສິ່ງທຸກຢ່າງທີ່ພວກເຮົາຕ້ອງການ. ຫຼາຍປີທີ່ຜ່ານມາ, ຂ້າພະເຈົ້າໄດ້ເຂົ້າໃຈວ່າ ແບບຢ່າງການອະທິຖານແມ່ນກ່ຽວກັບການປົດປ່ອຍແທ້ໆ:

- **"ຂ້າແດ່ພຣະບິດາຂໍໃຫ້ພຣະນາມຂອງພຣະອົງເປັນທີ່ໂຄຣົບບູຊາ"** (ຂ້ານ້ອຍປົດປ່ອຍຄວາມປາຖນາທີ່ຈະທຳຕົນເປັນພຣະເຈົ້າກັບສະຖານະການຕ່າງໆຂອງຂ້ານ້ອຍ.)
- **"ຂໍໃຫ້ພຣະຣາຊອານາຈັກຂອງພຣະອົງມາຕັ້ງຢູ່."** (ຂ້ານ້ອຍປົດປ່ອຍອານາຈັກຂອງຂ້ານ້ອຍເພື່ອຮັບເອົາອານາຈັກຂອງພຣະອົງ.)
- **"ຂໍຊົງໂຜດປະທານອາຫານປະຈຳວັນໃຫ້ຂ້າພຣະອົງທັງຫລາຍທຸກໆວັນ."** (ຂ້ານ້ອຍປົດປ່ອຍຄວາມປາຖນາທີ່ຈະເປັນຜູ້ໃຫ້ບໍລິການດ້ວຍຕົນເອງ.)
- **"ຂໍຊົງໂຜດຍົກຜິດບາບຂອງຂ້າພຣະອົງທັງຫລາຍ ດ້ວຍວ່າຂ້າພຣະອົງຍົກຄວາມຜິດບາບຂອງທຸກຄົນທີ່ເຮັດຜິດຕໍ່ຂ້າພຣະອົງນັ້ນ."** (ຂ້ານ້ອຍປົດປ່ອຍການໃຫ້ອະພັຍຜູ້ທີ່ໄດ້ເຮັດໃຫ້ຂ້ານ້ອຍບາດເຈັບ, ແລະຂ້ານ້ອຍຮັບຮູ້ແລະກັບໃຈສຳລັບບາດແຜທີ່ຂ້ານ້ອຍໄດ້ເຮັດໃຫ້ຄົນອື່ນ ແລະແມ່ນແຕ່ເຮັດໃຫ້ກັບຕົນເອງ.)
- **"ຂໍຢ່າຊົງພາຂ້າພຣະອົງທັງຫລາຍເຂົ້າໄປໃນການທົດລອງ."** (ຂ້ານ້ອຍປົດປ່ອຍຄວາມເຊື່ອຖືຂອງຂ້ານ້ອຍມາດົນນານວ່າຂ້ານ້ອຍມີອຳນາດຫຼາຍກວ່າຄວາມບາບແລະສິ່ງເສບຕິດຂອງຂ້ານ້ອຍ. ແລະຂ້ານ້ອຍປົດປ່ອຍຊັບສິນສ່ວນຕົວຂອງຂ້ານ້ອຍ, ຊັບສົມບັດ, ຊື່ສຽງ, ແລະຄວາມເຂັ້ມແຂງທີ່ຈະໂອບກອດສິ່ງທັງໝົດທັງປວງຄື: **ພຣະອົງ.**)

ຊີວິດກາຍເປັນການສເລີມສລອງແລະການສົນທະນາກັບພຣະອົງຜູ້ຊົງສ້າງຂອງພວກເຮົາ ຖ້າຫາກພວກເຮົາເຕັມໃຈທີ່ຈະຍອມຈຳນົນມອບທຸກສິ່ງທຸກຢ່າງໃຫ້ກັບພຣະອົງ. ອີກທາງເລືອກນຶ່ງຄືພຍາຍາມຕໍ່ໄປ ເມື່ອການປ່ຽນແປງແລະການພັກຜ່ອນລໍຄອຍຢູ່ພຽງເອື້ອມມືຖ້າຫາກພວກເຮົາພຽງແຕ່ຍອມຈຳນົນເທົ່ານັ້ນ.

*ທ່ານຮູ້ຄຸນຄ່າອັນໃດກ່ຽວກັບວິທີທີ່ພຣະເຢຊູຊົງສອນພວກເຮົາໃຫ້ອະທິຖານ?*

## 2. ລູກາ 11:5-10

*5 ພຣະອົງຊົງກ່າວກັບເຂົາວ່າ, "ຜູ້ໃດໃນພວກທ່ານມີມິດສະຫາຍຄົນນຶ່ງ ແລະຈະໄປຫາມິດສະຫາຍນັ້ນໃນເວລາທ່ຽງຄືນເວົ້າວ່າ 'ສະ*
*ຫາຍເອີຍ, ຂໍໃຫ້ຂ້ອຍຢືມເຂົ້າຈີ່ຈັກສາມກ້ອນແດ່. 6 ເພາະເພື່ອນຄົນນຶ່ງຂອງຂ້ອຍເດີນທາງມາແຫວ່ຂ້ອຍແລະຂ້ອຍບໍ່ມີອັນໃດຈະສູ່ເພິ່ນ*
*ກິນ'. 7 ຝ່າຍມິດສະຫາຍທີ່ຢູ່ຂ້າງໃນຈະຕອບອອກມາວ່າ, 'ຢ່າລົບກວນເຮົາເທາະປະຕູກໍອັດແລ້ວ, ພວກລູກຂອງເຮົາກໍນອນຢູ່ກັບເຮົາ*
*ໝົດແລ້ວ, ເຮົາລຸກຂຶ້ນເອົາໃຫ້ເຈົ້າບໍ່ໄດ້'. 8 ເຮົາບອກທ່ານທັງຫຼາຍວ່າ ເຖິງແມ່ນວ່າຜູ້ນັ້ນຈະບໍ່ລຸກຂຶ້ນເອົາໃຫ້ສະຫາຍນັ້ນ ເພາະການ*
*ເປັນສະຫາຍກັນກໍຕາມ ແຕ່ເພາະເຫັນແກ່ການດື້ຂໍຂອງສະຫາຍນັ້ນ ເພິ່ນກໍຈະລຸກຂຶ້ນເອົາໃຫ້ຕາມຄວາມຕ້ອງການ. 9 ຝ່າຍເຮົາ, ເຮົາ*
*ບອກພວກທ່ານວ່າຈົ່ງໝັ່ນຂໍ, ແລ້ວຈະຊົງປະທານໃຫ້. ຈົ່ງໝັ່ນຊອກແລ້ວຈະພົບ. ຈົ່ງໝັ່ນເຄາະແລ້ວຈະຊົງໄຂໃຫ້. 10 ເພາະວ່າທຸກຄົນ*
*ທີ່ໝັ່ນຂໍກໍໄດ້ຮັບ, ທຸກຄົນທີ່ໝັ່ນຊອກຫາກໍໄດ້ພົບ, ແລະທຸກຄົນທີ່ໝັ່ນເຄາະກໍຊົງໄຂໃຫ້.*

ພຣະເຢຊູຊົງໄດ້ສອນພວກເຮົາພລັງຂອງການອົດທົນພາກພຽນພຍາຍາມໃນການອະທິຖານດ້ວຍອາຣົມແລະຄວາມແຕກຕ່າງ. ພຣະອົງໄດ້ເລົ່າເຣື່ອງນຶ່ງກ່ຽວກັບການເຄາະປະຕູຕອນເດິກທີ່ເຮືອນຂອງເພື່ອນ. ເພື່ອນຜູ້ນີ້ປະຕິເສດທີ່ຈະມາທີ່ປະຕູ. **ເປັນດວ້ຍເຫດໃດ?** ດ້ວຍເຫດວ່າປະຕູກໍ່ອັດແລ້ວ. ພວກເພິ່ນນອນຫຼັບໝົດແລ້ວ. ພວກເດັກນ້ອຍອາດຈະຢ້ານກົວ. ລາວໄດ້ອ້ອນວອນເພື່ອນທີ່ຂັດສົນໃຫ້ໜີໄປດ້ວຍຄວາມຫຍຸ້ງຍາກທີ່ບໍ່ມີອາຫານ. ແຕ່ເພື່ອນທີ່ຢູ່ອີກດ້ານນຶ່ງຂອງປະຕູບໍ່ຍອມເຊົາເຄາະປະຕູ. ໃນທີ່ສຸດ, ເນື່ອງຈາກຄວາມອົດທົນຂອງເພື່ອນທີ່ຂັດສົນ, ໝູ່ເພື່ອນທີ່ນອນຫຼັບໄດ້ກັບໃຈຍອມຈຳນົນ. ເພື່ອໃຫ້ແນ່ໃຈ, ພຣະເຢຊູຊົງຕ້ອງການໃຫ້ພວກເຮົາສຸມໃຈໃສ່ຄວາມພາກພຽນພຍາຍາມໃນເຣື່ອງນີ້. ພວກເຮົາບໍ່ສົມຄວນຄິດວ່າພຣະເຢຊູຊົງເວົ້າວ່າພຣະເຈົ້າຊົງເປັນຄືກັບເພື່ອນຜູ້ທີ່ນອນຢູ່ເທິງຕຽງນັ້ນ. ນັ້ນບໍ່ແມ່ນຈຸດຂອງເຣື່ອງ. **ຈຸດຂອງເຣື່ອງແມ່ນຄວາມອົດທົນພຍາຍາມ.**

ບາງຄຳອະທິຖານຂອງພວກເຮົາຖືກຕອບພາຍໃນນາທີ, ພາຍໃນຫຼາຍມື້, ແລະແນ່ນອນ, ບາງຄຳອະທິຖານຂອງພວກເຮົາຈະຖືກຕອບດົນນານຫຼັງຈາກພວກເຮົາໄດ້ຈາກໂລກນີ້ໄປເພື່ອສເລີມສລອງກັບບັນດາພວກທູດສວັນຂອງພຣະເຈົ້າ. ທ່ານມີຄວາມອົດທົນຫຼາຍປານໃດໃນການອະທິຖານ? ຂ້າພະເຈົ້າສາມາດບອກຄວາມລັບແກ່ທ່ານໄດ້ບໍ່, ພຽງແຕ່ສອງຄົນເຮົາ? ຂ້າພະເຈົ້າໄດ້ອະທິຖານຢ່າງຈິງຈັງເພື່ອລູກຊາຍທີ່ຫຼົງຫາຍຂອງຂ້າພະເຈົ້າເປັນເວລາ 25 ປີ. ຂ້າພະເຈົ້າໄດ້ອະທິຖານເພື່ອລາວທຸກໆມື້. ເປັນເວລາຫຼາຍປີທີ່ຂ້າພະເຈົ້າບໍ່ເຫັນຄວາມຄືບໜ້າ ແລະຂ້າພະເຈົ້າໄດ້ເລີ່ມຈັດການກັບທັດສະນະຄະຕິກ່ຽວກັບເຣື່ອງນີ້ໃນການອະທິຖານ. **ຂ້າພະເຈົ້າເຮັດຜິດຫຼືບໍ່? ສິ່ງນີ້ເຮັດວຽກໄດ້ຢ່າງໃດ?** ພຽງແຕ່ບໍ່ດົນມານີ້, ພວກເຮົາໄດ້ເລີ່ມຕົ້ນເຫັນການດົງຢ່າງລຶກລັບຂອງພຣະວິນຍານບໍຣິສຸດຊຶ່ງເກີດຜົນແຫ່ງຄວາມຢາກຮູ້ຢາກເຫັນແລະຄວາມເຊື່ອ. ມັນໄດ້ເກີດຂຶ້ນຢ່າງຊ້າໆ, ແຕ່ຂ້າພະເຈົ້າໄດ້ຮຽນຮູ້ຫຼາຍທີ່ສຸດໂດຍຜ່ານວິທີການຂອງການອ້ອນວອນຕາງໜ້າ(intercession). ຂໍ້ດີແລະຂໍ້ເສັຽສັ້ນໆກໍ່ຄືການອົດທົນພາກພຽນພຍາຍາມໃນການອະທິຖານຈະຊ່ວຍສ້າງກ້າມເນື້ອທາງຈິດວິນຍານແລະຄວາມເຊື່ອທີ່ເໜືອທັມມະຊາດ.

ພຣະເຈົ້າຊົງມີຕາຕະລາງ, ແຕ່ພວກເຮົາບໍ່ໄດ້ເຫັນມັນ, ແລະແນ່ນອນວ່າພວກເຮົາບໍ່ສາມາດສ້າງຕາຕະລາງນັ້ນຂຶ້ນມາໄດ້. ພຣະເຢຊູຊົງຮູ້ດີວ່າການຢືນຢູ່ທີ່ປະຕູແລະເຄາະປະຕູນັ້ນເປັນແນວໃດ. ພຣະອົງໄດ້ຊົງເຄາະປະຕູໂບດເປັນເວລາຫຼາຍປີມາແລ້ວ. ສຳລັບຄຣິສຕະຈັກບາງແຫ່ງ, ຂ້າພະເຈົ້າຈະຈິນຕະນາການວ່າພຣະອົງໄດ້ຊົງເຄາະປະຕູມາເປັນເວລາຫຼາຍສະຕະວັດແລ້ວໂດຍທີ່ຍັງບໍ່ໄດ້ຮັບອະນຸຍາດໃຫ້ເຂົ້າໄປ. ແຕ່ວ່າພຣະອົງຍັງຊົງໄດ້ເຄາະແລ້ວເຄາະອີກຢ່າງຊົງອົດທົນ. ນ້ອງຂອງພຣະເຢຊູ, ຢາໂກໂບ, ເຕືອນພວກເຮົາໃນພຣະຄຳຊ່ວງນີ້ວ່າ:*"ແລະຈົ່ງໃຫ້ຄວາມໝັ້ນໃຈນັ້ນດຳເນີນງານຈົນສຳເລັດ ເພື່ອທ່ານທັງຫລາຍຈະໄດ້ເປັນຄົນສຳເລັດແລະຄົບຖ້ວນໂດຍບໍ່ຂາດເຂີນສິ່ງໃດ."* (ຢກບ 1:4). **ພຣະເຈົ້າຊົງພ້ອມສເມີສຳລັບບາງສິ່ງແມ້ແຕ່ຄວາມລ່າຊ້າກໍ່ຕາມ.**

*ເປັນຫຍັງຄວາມອົດທົນພາກພຽນພຍາຍາມຈຶ່ງເປັນສ່ວນສຳຄັນໃນຊີວິດການອະທິຖານຂອງບັນດາຜູ້ທີ່ເຊື່ອ?*

## 3. ລູກາ 11:11-13

*11ຜູ້ໃດໃນພວກທ່ານທີ່ເປັນພໍ່, ຖ້າລູກຂໍປາຈະບໍ່ເອົາງູຕາງປາໃຫ້ແກ່ລູກຫຼື? 12ຖ້າຂໍໄຂ່ຈະບໍ່ໄດ້ເອົາແມງງອດໃຫ້ຫຼື? 13ເຫດສັນນັ້ນຖ້າທ່ານທັງຫລາຍເອງຜູ້ເປັນຄົນຊົ່ວ ຍັງຮູ້ຈັກເອົາຂອງດີໃຫ້ແກ່ລູກຂອງຕົນ, ຫລາຍກວ່ານັ້ນອີກຈັກເທົ່າໃດ ພຣະບິດາຜູ້ຊົງສະຖິດໃນສວັນຈະຊົງປະທານພຣະວິນຍານບໍຣິສຸດແກ່ຜູ້ທີ່ຂໍຈາກພຣະອົງ?"*

ພຣະເຢຊູຊົງຕິດຕາມການທ້າທາຍຂອງພຣະອົງຕໍ່ຄວາມອົດທົນ ໂດຍການເຕືອນພວກເຮົາກ່ຽວກັບລັກສະນະທີ່ແທ້ຈິງຂອງຜູ້ເປັນພໍ່. ພຣະອົງໄດ້ຊົງຖາມດ້ວຍຄຳຖາມຫຼາຍຂໍ້: "ຜູ້ໃດໃນພວກທ່ານທີ່ເປັນພໍ່, ຖ້າລູກຂໍປາຈະບໍ່ເອົາງູຕາງປາໃຫ້ແກ່ລູກຫຼື? ຫຼືຖ້າຂໍໄຂ່ຈະບໍ່ໄດ້ເອົາແມງງອດໃຫ້ຫຼື?" ພຣະເຢຊູໄດ້ຊົງໃຊ້ຄຳເວົ້າທີ່ເກີນຄວາມຈິງ(hyperbole)ເພື່ອຊົງຊີ້ຈຸດຂອງພຣະອົງ. ພໍ່ຈອມບິດເບືອນຄົນໃດທີ່ອາດສະແດງຄວາມສາມາດທີ່ສ່ຽງແບບນັ້ນ?

*ມີເຫດຜົນອັນໃດແດ່ທີ່ພວກເຮົາອາດລັງເລໃຈທີ່ຈະອະທິຖານກ່ຽວກັບບາງສິ່ງບາງຢ່າງ?*

ແລ້ວພຣະເຢຊູຊົງໄດ້ຫັນໂຕະມາຫາພວກເຮົາອີກ: "*ຖ້າທ່ານທັງຫລາຍເອງຜູ້ເປັນຄົນຊົ່ວ ຍັງຮູ້ຈັກເອົາຂອງດີໃຫ້ແກ່ລູກຂອງຕົນ, ຫຼາຍ*

*ກວ່ານັ້ນອີກຈັກເທົ່າໃດ ພຣະບິດາຜູ້ຊົງສະຖິດໃນສວັນຈະຊົງປະທານພຣະວິນຍານບໍຣິສຸດແກ່ຜູ້ທີ່ຂໍຈາກພຣະອົງ?"* ຄຳເວົ້າທີ່ເກີນຄວາມຈິງນີ້ກົງກັນຂ້າມກັບລັກສນະທັມມະຊາດຂອງພວກເຮົາ ແຕ່ມີຂໍ້ບົກພ່ອງຢ່າງເລິກເຊິ່ງຕໍ່ພຣະບິດາໃນຟ້າສວັນ ອົງຜູ້ຊົງສົມບູນແບບແລະຊົງເຕັມປ່ຽມດ້ວຍຄວາມຮັກ. ນັບຕັ້ງແຕ່ຕອນທີ່ພວກເຮົາໄດ້ເລີ່ມຕົ້ນການເດີນທາງຂອງພວກເຮົາ, ພວກເຮົາໄດ້ລົງທະບຽນເຂົ້າຮັບການບຳບັດທາງຈິດວິນຍານແລ້ວ. ມັນແມ່ນຈຸດທີ່ພວກເຮົາຢູ່. ທຸກໆຄົນທີ່ທ່ານຮູ້ຈັກແມ່ນກຳລັງຢູ່ໃນລະຍະພັກຟື້ນຈາກບາງສິ່ງບາງຢ່າງ. ແລະຖ້າຫາກວ່າພວກເຂົາເຈົ້າຄິດວ່າພວກເພິ່ນໄດ້ພັກຟື້ນເຕັມທີ່ແລ້ວ(ຫາຍດີແລ້ວ), ກໍ່ຈິງນັບພວກເຂົາເຈົ້າເປັນຄືກັບການຫາຍດີຂອງບັນດາພວກຟາຣີຊາຍ(ໜ້າໄຫວ້ຫຼັງຫຼອກ).

ພວກເຮົາບໍ່ເຄີຍຮູ້ຈັກວ່າຄວາມຮັກຂອງພຣະບິດາແຫ່ງຟ້າສວັນນັ້ນມັນເລິກຊຶ້ງປານໃດຈົນກວ່າພວກເຮົາຈະຕົກເຖິງຈຸດຕ່ຳທີ່ສຸດໃນຊີວິດ. ບາງຄັ້ງພວກເຮົາຕ້ອງພົບກັບຄວາມຫາຍຍະນະເພື່ອຈະເຫັນມຸມມອງທີ່ແທ້ຈິງຂອງຄວາມຮັກຂອງພຣະເຈົ້າ. ບັນດາຄົນທີ່ມີຄວາມເຊື່ອພຣະເຈົ້າທີ່ສຸດບາງຄົນທີ່ຂ້າພະເຈົ້າຮູ້ຈັກ ໄດ້ປະເຊີນກັບອຸປສັກອັນໃຫຍ່ຫລວງ, ປະເຊີນກັບຄວາມເຈັບປ່ວຍ, ແລະປະເຊີນກັບຄວາມລົ້ມເຫຼວ. ມັນເຫັນໄດ້ຢ່າງຊັດເຈນວ່ານັ້ນຄືສ່ວນນຶ່ງຂອງຂໍ້ຕົກລົງ(part of the deal). **ໃນຊ່ວງເວລາແຫ່ງຄວາມສິ້ນຫວັງຄັ້ງຍິ່ງໃຫຍ່ທີ່ສຸດ, ພວກເຮົາຄົ້ນພົບຄວາມຮັກອັນລ້ຳເລີກທີ່ພວກເຮົາບໍ່ເຄີຍຮູ້ຈັກໂດຍທາງອື່ນມາກ່ອນ.**

ມີສັນຕິສຸກທີ່ລຶກລັບໃນເມື່ອທ່ານໄດ້ຖືກປະໃຫ້ຢູ່ກັບພຣະເຢຊູແຕ່ເທົ່ານັ້ນ. ພຣະອົງຊົງເປັນເພື່ອນທີ່ສັດຊື່ທີ່ຢູ່ຄຽງຂ້າງທ່ານ, ໃນຂນະທີ່ຄົນອື່ນປະລະຖິ້ມທ່ານ. ເມື່ອທ່ານເຂົ້າໄປໃນຫ້ອງບັນລັງ, ທ່ານຈະເລີ່ມຮູ້ວ່າພຣະອົງພຽງພໍທີ່ຈະຕື່ມຈອກເປົ່າຂອງທ່ານໃຫ້ເຕັມແລະຊົງເຮັດໃຫ້ພາຍຸສງົບລົງພາຍໃນ. **ພຣະອົງຊົງສາມາດໄດ້ຍິນຖ້າຫາກວ່າທ່ານຍອມໃຫ້ພຣະອົງຊົງເຂົ້າສູ່ຄວາມງຽບສງັດຂອງທ່ານ.**

*ມຸມມອງຂອງພວກເຮົາກ່ຽວກັບພຣະເຈົ້າມີອິທິພົນກະທົບຕໍ່ຊີວິດການອະທິຖານຂອງພວກເຮົາແນວໃດ?*

## ນຳໃຊ້ໃນຊີວິດ:

ຄວາມເຊື່ອສແວງຫາພຣະເຈົ້າເພື່ອຈັດຕຽມສິ່ງທີ່ພວກເຮົາຕ້ອງການ. ຈົ່ງໃຊ້ນຶ່ງໃນການນຳໃຊ້ດັ່ງຕໍ່ລົງໄປນີ້:

- **ສະມາທິ.** ຈົ່ງເລືອກບົດເພງສັນຣະເສີນແລະໃຊ້ພຣະຄຳໃນບົດນັ້ນໃຫ້ເປັນຄຳແນະນຳເພື່ອນະມັສການພຣະເຈົ້າ. ຈົ່ງອະນຸຍາດໃຫ້ປໂຍກຈາກພຣະຄຳເພງສັນຣະເສີນນັ້ນ ນຳທ່ານໄປຕລອດອາທິດຂ້າງໜ້າທີ່ຈະມາເຖິງນີ້.
- **ບັນທຶກ.** ຈົ່ງຂຽນບັດອະທິຖານສົ່ງໄປໃຫ້ເພື່ອນຄົນນຶ່ງ. ຈົ່ງໃຫ້ບຸກຄົນຜູ້ນັ້ນຮູ້ວ່າທ່ານກຳລັງອະທິຖານເພື່ອລາວແລະແບ່ງປັນຄຳອະທິຖານສະເພາະເຈາະຈົງທີ່ທ່ານກຳລັງອະທິຖານຢູ່ນັ້ນກັບບຸກຄົນຜູ້ນີ້.
- **ຝຶກຊ້ອມ.** ຢູ່ໃນສວນເຄັດເຊມາເນ, ພຣະເຢຊູຊົງໄດ້ຖາມບັນດາອັຄສາວົກຂອງພຣະອົງວ່າ: *"ຢ່າງນັ້ນພວກທ່ານບໍ່ສາມາດຈະຄອຍເຝົ້າຢູ່ກັບເຮົາຈັກຫນຶ່ງຊົ່ວໂມງຫຼື?"* (ມທ 26:40). ທ່ານຈະໃຊ້ເວລາມື້ນຶ່ງໃນອາທິດນີ້ແລະອະທິຖານເປັນເວລານຶ່ງຊົ່ວໂມງໄດ້ຫຼືບໍ່? ຈົ່ງວາງແຜນການແລະວິທີສຳລັບການໃຊ້ຊົ່ວໂມງນັ້ນ. ດ້ວຍແຜນການນັ້ນ, ທ່ານຈະອັສຈັນໃຈວ່າເວລາຈະຜ່ານໄປໄວຊ່ຳໃດ!

ພຣະເຢຊູໄດ້ຊົງເຊື້ອເຊີນພວກເຮົາເຂົ້າໄປໃນຫ້ອງບັນລັງແຫ່ງການອະທິຖານ. ມັນເປັນການເຊື້ອເຊີນຢ່າງເປີດເຜີຍໃຫ້ເຂົ້າສູ່ການຊົງສະຖິດຢູ່ຂອງພຣະອົງ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ SSK**